# ໜັງສືໂຢຮັນທີ ໒

ໃຈຄວາມສຳຄັນ:   ຄວາມຮັກແລະຄວາມຈິງ

ຈຳນວນບົດ:   ໑ ບົດ

## ວ່າດ້ວຍຜູ້ຂຽນໜັງສືນີ້

ທ່ານໂຢຮັນໄດ້ຂຽນໜັງສືນີ້ເມື່ອອາຍຸແກ່ແລ້ວ ເພິ່ນຂຽນບອກຊື່ເພິ່ນເອງວ່າ "ຜູ້ເຖົ້າແກ່" ເນື້ອຄວາມທີ່ຂຽນໄວ້ໃນສະບັບນີ້ ເໝືອນກັນກັບສະບັບທີ ໑ ເພິ່ນຂຽນໄປຫາຜູ້ຍິງຄົນນຶ່ງກັບລູກຂອງນາງ ຊຶ່ງເພິ່ນຖືວ່າເປັນຜູ້ທີ່ຖືກເລືອກໄວ້

## ວ່າດ້ວຍຄວາມມຸ່ງໝາຍ:

໑. ເພື່ອສະແດງຄວາມຍິນດີ ທີ່ລູກຂອງນາງໄດ້ປະພຶດຕາມຄວາມສັດຈິງ ແລະເພື່ອຕັກເຕືອນພວກເຂົາໃຫ້ຮັກແພງຊຶ່ງກັນແລະກັນ ຂໍ້ ໔

໒. ເພື່ອບອກສອນພວກເຂົາໃຫ້ຣະມັດຣະວັງຄົນທີ່ຫລອກລວງ ຊຶ່ງບໍ່ຍອມຮັບວ່າພຣະເຢຊູຄຣິດສະເດັດມາທາງຝ່າຍເນື້ອໜັງ ຂໍ້ ໗–໑໑

໓. ເມື່ອທ່ານໂຢຮັນຂຽນໜັງສືຂ່າວປະເສີດ ເພິ່ນໄດ້ຂຽນຢ່າງຊັດແຈ້ງວ່າ ພຣະເຢຊູຄຣິດຊົງເປັນພຣະບຸດຂອງພຣະເຈົ້າ ດ້ວຍວ່າເວລານັ້ນມີຫລາຍຄົນບໍ່ເຊື່ອວ່າ ພຣະເຢຊູຊົງເປັນພຣະເຈົ້າ ສະນັ້ນເມື່ອເພິ່ນຂຽນສະບັບທີສອງນີ້ ຈຶ່ງໄດ້ຂຽນວ່າ ພຣະເຢຊູສະເດັດມາທາງຝ່າຍເນື້ອໜັງ ເພາະໄດ້ມີຄຣູສອນບອກວ່າ ພຣະເຢຊູບໍ່ໄດ້ກາຍ

ເປັນຝ່າຍເນື້ອໜັງ ດ້ວຍເຫດນີ້ເພິ່ນຈຶ່ງຂຽນໃຫ້ຣະມັດຣະວັງພວກຄຣູ
ສອນປອມ ຂໍ້ ໑໐–໑໑

ການແບ່ງເປັນພາກ:

ຄຳນຳ ຂໍ້ ໑–໓

ພາກທີ ໑ ວ່າດ້ວຍທາງຂອງຄົນທີ່ເຊື່ອ ຂໍ້ ໔–໖

ກ. ທາງແຫ່ງຄວາມຈິງ ຂໍ້ ໔

ຂ. ທາງແຫ່ງຄວາມຮັກ ຂໍ້ ໕–໖

ພາກທີ ໒ ວ່າດ້ວຍຄຳຕັກເຕືອນໃຫ້ສະແດງຄວາມຄ່ານັບ ຂໍ້ ໗–໑໑

ກ. ຄຳສັ່ງສອນປອມ ຂໍ້ ໗

ຂ. ຕ້ອງປະພຶດຢາງໃດ ຂໍ້ ໘–໑໑

ຄ. ຄວາມປາຖນາແລະຄວາມຄຳນັບ ຂໍ້ ໑໒–໑໓